**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຫົວພັນ

ພະແນກກະສິກຳ ແລະ ສິ່ງແວດລ້ອມ

ເລກທີ:...0482.../ກສຂ

ຫົວພັນ, ວັນທີ:...22.../...7.../2026

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາຈັດຊື້ສິນຄ້າ

ເລື່ອງ: ເຂົ້າຮ່ວມການປະມູນແບບສົມທຽບລາຄາ ຈັດຊື້ -ຈັດຈ້າງອຸປະກອນ ແລະ ແນວພັນສົ່ງເສີມການລ້ຽງໝູນ້ອຍ ແລະ ສົ່ງເສີມການລ້ຽງໄກ່ລາດ ຜະລິດເປັນສິນຄ້າຂະໜາດນ້ອຍ ໃຫ້ສະມາຊິກບ້ານເປົ້າໝາຍ ເມືອງວຽງໄຊ

- ອີງຕາມ ສັນຍາເງິນກູ້ລະຫວ່າງລັດຖະບານ ສປປ ລາວ ແລະ ທະນາຄານພັດທະນາ ອາຊີ (ADB)ເລກທີ ADB Loan No.3817-Lao (COL),ເງິນຊ່ວຍເຫຼືອລ້າ ເລກທີ ADB Grant No.0659-Lao (SF),EU Grant No.0660-Lao (EF ລົງວັນທີ 30 ຕຸລາ 2019, ເງິນຊ່ວຍເຫຼືອລ້າ ເລກທີ GAFSP Grant No.0912-Lao (EF), ລົງວັນທີ 12 ທັນວາ 2023.
- ອີ່ງຕາມ ຂໍ້ຕົກລົງອະນຸມັດດຳເນີນການປະມູນສົມທຽບລາຄາຈັດຊື້ອຸປະກອນ ແລະ ແນວພັນສົ່ງເສີມການລ້ຽງໝູນ້ອຍ ແລະ ສົ່ງເສີມການລ້ຽງໄກ່ລາດ ຜະລິດເປັນສິນຄ້າຂະໜາດນ້ອຍ ໃຫ້ສະມາຊິກບ້ານເປົ້າໝາຍ ເມືອງວຽງໄຊ ສະບັບເລກທີ່ 1499 /ກສຂ,ລົງວັນທີ 22 ກໍລະກົດ 2026

1. ມີຈຸດປະສົງນຳໃຊ້ສ່ວນໜຶ່ງຂອງທຶນ ເພື່ອດຳເນີນການຈັດຊື້ສິນຄ້າ ອຸປະກອນ ແລະ ແນວພັນສົ່ງເສີມການລ້ຽງໝູນ້ອຍ ແລະ ສົ່ງເສີ່ມການລ້ຽງໄກ່ລາດ ຜະລິດເປັນສິນຄ້າຂະໜາດນ້ອຍ ດ້ວຍການປະມູນສົມທຽບລາຄາ(Shopping).
2. ພະແນກກະສິກຳ ແລະ ສິ່ງແວດລ້ອມ ຫ້ອງການປະສານງານໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (ພຊຄ) ແຂວງຫົວພັນ ຂໍເຊີນບໍລິສັດ/ຫ້າງຮ້ານ ເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບການຈັດຊື້ສິນຄ້າ ອຸປະກອນ ແລະ ແນວພັນສົ່ງເສີມການລ້ຽງໝູນ້ອຍ ແລະ ສົ່ງເສີ່ມການລ້ຽງໄກ່ລາດ ຜະລິດເປັນສິນຄ້າຂະໜາດນ້ອຍ ໄລຍະເວລາໃນການຈັດສົ່ງແມ່ນ 30 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

4. ບໍລິສັດ ຫຼື ຮ້ານທີ່ຈະເຂົ້າຮ່ວມປະມູນຕ້ອງປະກອບບັນດາເອກະສານດັ່ງລຸ່ມນີ້:

– ຊື່ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ປະມູນ, ທີ່ຢູ່ທາງການ.
– ສຳເນົາໃບທະບຽນວິສາຫະກິດ
– ໜັງສືອະນຸຍາດດຳເນີນທຸລະກິດ ຫຼື ເອກະສານຢັ້ງຢືນການຕໍ່ໜັງສືອານຸຍາດດຳເນີນທຸລະກິດ ປີ 2026
– ມີໃບຢັ້ງຢືນການເສຍອາກອນ ປີ 2025
- ໜັງສືມອບສິດໃນການເຊັນເອກະສານປະມູນສະບັບຕົ້ນ, ຖ້າຫາກມີ.
- ມີປະສົບການໃນການສະໜອງສິນຄ້າປະເພດດັ່ງກ່າວຢ່າງໜ້ອຍ 2 ປີ.

5. ເປີດຮັບເອກະສານເລີ່ມແຕ່ ວັນທີ 24 ກໍລະກົດ 25 ສິງຫາ 2026

6. ຊອງປະມູນຕ້ອງສົ່ງກ່ອນເວລາ 8 ໂມງ 30 ນາທີ ວັນທີ 25 ສິງຫາ 2026 ທີ່ ຫ້ອງການປະສານງານໂຄງການ ພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (ພຊຄ) ແລະ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ 08 ໂມງ 30 ນາທີ ຂອງວັນດຽວກັນໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈຕ້ອງການເຂົ້າຮ່ວມ.

7. ສຳລັບຂໍ້ມູນລາຍລະອຽດເພີ່ມເຕີມສາມາດຕິດຕໍ່ພົວພັນໄດ້ທີ່ຫ້ອງການປະສານງານໂຄງການໂດຍກົງໃນໂມງລັດຖະການຕາມທີ່ຢູ່ລຸ່ມນີ້:

ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຫົວພັນ, ຫ້ອງການປະສານງານໂຄງການພັດທະນາພື້ນຖານໂຄງລ່າງຊົນນະບົດ ແລະ ການຄຸ້ມຄອງອ່າງໂຕ່ງແບບຍືນຍົງ (ພຊຄ)
ຂະແໜງຊົນລະປະທານ.ຊັ້ນ 2 ເບີຫ້ອງ 01
ທີ່ຢູ່: ຖະໜົນໜອງຄ້າງ, ບ້ານ ທາດເມືອງ, ເມືອງ ຊຳເໜືອ, ແຂວງຫົວພັນ
ເບີໂທຕິດຕໍ່: **020 5895 5456**; E-mail: chitsoukjalern@gmail.com ຜູ້ປະສານງານໂຄງການ
**020 5942 2945** ; E-mail: thomsou licntham@gmail.comນາງ ທຸມມີ (ຜູ້ຊ່ວຍຈັດຊື້-ຈັດຈ້າງ)

ຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ

ແກ້ວປະສິດ ນິກມະນີວົງ